**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 1206---- /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 23/04/19

# ຄຳແນະນຳ
## ກ່ຽວກັບການຈັດຕັ້ງປະຕິບັດ
## ກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມໃບສະເໜີຂອງກົມປະກັນສັງຄົມ ສະບັບເລກທີ 194/ປສ, ລົງວັນທີ 8 ເມສາ 2019.

**ລັດຖະມົນຕີ ອອກຄຳແນະນຳ:**

### I. ຈຸດປະສົງ

ຄຳແນະນຳສະບັບນີ້ວາງອອກ ເພື່ອຜັນຂະຫຍາຍ ແລະ ແນະນຳການຈັດຕັ້ງປະຕິບັດເນື້ອໃນບາງມາດຕາ ຂອງກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ສະບັບເລກທີ 54/ສພຊ, ລົງວັນທີ 27 ມິຖຸນາ 2018 ໃຫ້ລະອຽດຈະແຈ້ງ ແລະ ເປັນບ່ອນອີງໃນການເລີ່ມຕົ້ນປະຕິບັດກົດໝາຍສະບັບປັບປຸງດັ່ງກ່າວນີ້ໃນຂອບເຂດທົ່ວປະເທດ.

### II. ອະທິບາຍເພີ່ມເຕີມ ເນື້ອໃນ ແລະ ຂໍ້ກຳນົດຂອງບາງມາດຕາ

#### 1. ມາດຕາ 30 ແລະ ມາດຕາ 54 ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ

ການຄິດໄລ່ເງິນອຸດໜູນເສຍກຳລັງແຮງງານ ໃຫ້ຄິດໄລ່ໂດຍເອົາເງິນເດືອນສຸດທ້າຍ ສຳລັບພາກລັດ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນ ຄືນຫຼັງ ສຳລັບພາກວິສາຫະກິດ ແລະ ຜູ້ສະໝັກໃຈ ຄູນກັບ ລະດັບສ່ວນຮ້ອຍຂອງອຸດໜູນເສຍກຳລັງແຮງງານແຕ່ລະປະເພດ.

**ຕົວຢ່າງ:** ທ້າວ ກ ມີເງິນເດືອນ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນ ສຸດທ້າຍ ເທົ່າກັບ 2.500.000 ກີບ ແລະ ເສຍກຳລັງແຮງງານຈັດໃນປະເພດທີ ສອງ ເທົ່າກັບ 70%.

ຖ້າຜູ້ກ່ຽວເສຍກຳລັງແຮງງານຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ ຂອງຜູ້ກ່ຽວເທົ່າກັບ: 2.500.000 ກີບ x 70% x 100% = 1.750.000 ກີບ/ເດືອນ, ກໍລະນີຜູ້ກ່ຽວຍັງເຮັດວຽກມີເງິນເດືອນ ເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.750.000 x 50% = 875.000 ກີບ/ເດືອນ ແລະ ກໍລະນີຜູ້ກ່ຽວເຂົ້າຮັບບຳນານເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.750.000 x 25% = 437.500 ກີບ/ເດືອນ.



Scanned with CamScanner

ຖ້າຜູ້ກ່ຽວເສຍກຳລັງແຮງງານຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ ເງິນອຸດໜູນເສຍກຳລັງແຮງງານລາຍເດືອນ ຂອງຜູ້ກ່ຽວເທົ່າກັບ: 2.500.000 ກີບ x 70% x 80% = 1.400.000 ກີບ/ເດືອນ, ກໍລະນີຜູ້ກ່ຽວຍັງເຮັດວຽກມີເງິນເດືອນ ເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.400.000 x 50% = 700.000 ກີບ/ເດືອນ ແລະ ກໍລະນີຜູ້ກ່ຽວເຂົ້າຮັບບຳນານເງິນອຸດໜູນເສຍກຳລັງແຮງງານຂອງຜູ້ກ່ຽວ ເທົ່າກັບ: 1.400.000 x 25% = 350.000 ກີບ/ເດືອນ.

ຜູ້ປະກັນຕົນທີ່ໄດ້ຮັບເງິນອຸດໜູນເສຍກຳລັງແຮງງານລາຍເດືອນ ທີ່ບໍ່ແມ່ນການສູນເສຍອະໄວຍະວະ ຫຼື ການເສຍກຳລັງແຮງງານຖາວອນ ຊຶ່ງໄດ້ຮັບການອະນຸມັດໃໝ່ຕາມກົດໝາຍສະບັບນີ້ ຕ້ອງມີການປະເມີນລະດັບການເສຍກຳລັງແຮງງານຄືນໃໝ່ ໂດຍແຍກເປັນ ສອງຄັ້ງ ຄື: ພາຍຫຼັງຮັບການອຸດໜູນແລ້ວ ສອງປີ ຕ້ອງໄດ້ຮັບການປະເມີນຄືນເປັນຄັ້ງທຳອິດ ແລະ ຫຼັງຈາກນັ້ນ ສາມປີ ຕ້ອງໄດ້ຮັບການປະເມີນຄືນເປັນຄັ້ງສຸດທ້າຍ, ຖ້າບໍ່ມາຮັບການປະເມີນຄືນຕາມທີ່ໄດ້ກຳນົດໄວ້ ແມ່ນຈະຖືກໂຈະເງິນອຸດໜູນເສຍກຳລັງແຮງງານ ຈົນກວ່າຈະໄດ້ຮັບການປະເມີນໃຫ້ຖືກຕ້ອງຕາມລະບຽບການ.

ການປະເມີນການເສຍກຳລັງແຮງງານແຕ່ລະຄັ້ງ ແມ່ນສາມາດດຳເນີນຈາກພາກສ່ວນກ່ຽວຂ້ອງຢູ່ສູນກາງ ແລະ ທ້ອງຖິ່ນ ແຕ່ພາຍຫຼັງປະເມີນແລ້ວ ຕ້ອງໄດ້ສົ່ງໃບປະເມີນດັ່ງກ່າວໃຫ້ ຄະນະຮັບຜິດຊອບຕີເປີເຊັນການແບ່ງຂັ້ນຂາດສະມັດຕະພາບແຮງງານຂອງຄົນເຈັບ-ພິການ ເພື່ອຢັ້ງຢືນຄືນ.

## 2. ມາດຕາ 40 ແລະ ມາດຕາ 63 ການຄິດໄລ່ເງິນອຸດໜູນເສຍຊີວິດ

ການຄິດໄລ່ເງິນອຸດໜູນເສຍຊີວິດ ເທົ່າກັບ ສິບຫ້າເດືອນ ຂອງເງິນເດືອນ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນຄືນຫຼັງ, ເງິນອຸດໜູນບຳນານ ຫຼື ເງິນອຸດໜູນເສຍກຳລັງແຮງງານເດືອນສຸດທ້າຍ ເປັນຈຸດເລີ່ມ ຊຶ່ງການຄິດໄລ່ເງິນອຸດໜູນເສຍຊີວິດ ບົນພື້ນຖານ ປີການ ຫຼື ໄລຍະປີປະກັນຕົນ ຕາມຕາຕະລາງ ດັ່ງນີ້:

| ປີການ/ໄລຍະປະກັນຕົນ | ເງິນອຸດໜູນເສຍຊີວິດ | ໝາຍເຫດ |
|---|---|---|
| 1 ເດືອນ - 1 ປີ | ເທົ່າກັບ 15 ເດືອນ | ຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ |
| 3 ເດືອນ - 1 ປີ | ເທົ່າກັບ 15 ເດືອນ | ຍ້ອນອຸປະຕິເຫດອື່ນ ຫຼື ພະຍາດທົ່ວໄປ |
| ເກີນ 1 ປີ - 2 ປີ | ເທົ່າກັບ 16 ເດືອນ | ຜູ້ມີປີການ/ໄລຍະປະກັນຕົນເກີນ 1 ປີ ຫາ 6 ປີ ຈະໄດ້ເພີ່ມອີກ 1 ເດືອນ ຕໍ່ ປີ ທີ່ເກີນ. |
| 3 ປີ | ເທົ່າກັບ 17 ເດືອນ | |
| 6 ປີ | ເທົ່າກັບ 20 ເດືອນ | |
| 7 ປີ | ເທົ່າກັບ 20,5 ເດືອນ | ນັບແຕ່ປີທີ 7 ຂຶ້ນໄປ ຈະໄດ້ເພີ່ມອີກ 0,5 ເດືອນ ຕໍ່ປີທີ່ເກີນ. |
| 8 ປີ | ເທົ່າກັບ 21 ເດືອນ | |

**ຕົວຢ່າງ 1 :** ທ້າວ ຂ ມີເງິນເດືອນ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນ ຄືນຫຼັງ ເທົ່າກັບ 2.500.000 ກີບ, ມີປີການ ຫຼື ປີປະກັນຕົນ 5 ປີ ເງິນອຸດໜູນເສຍຊີວິດໄດ້ເທົ່າກັບ 19 ເດືອນ, ການຄິດໄລ່ເທົ່າກັບ:

2.500.000 ກີບ x 19 ເດືອນ = 47.500.000 ກີບ.

**ຕົວຢ່າງ 2 :** ທ້າວ ຄ ມີເງິນເດືອນ ຫຼື ເງິນປະກັນຕົນສະເລ່ຍ ຫົກເດືອນ ຄືນຫຼັງ ເທົ່າກັບ 2.500.000 ກີບ, ມີປີການ ຫຼື ປີປະກັນຕົນ 10 ປີ ເງິນອຸດໜູນເສຍຊີວິດໄດ້ເທົ່າກັບ 22 ເດືອນ, ການຄິດໄລ່ເທົ່າກັບ:

2.500.000 ກີບ x 22 ເດືອນ = 55.000.000 ກີບ.



Scanned with CamScanner

## 3. ມາດຕາ 49 ການຄິດໄລ່ເງິນອຸດໜູນອອກລູກ

ການຄິດໄລ່ເງິນອຸດໜູນອອກລູກເປັນລາຍເດືອນ ສໍາລັບຜູ້ທີ່ມີໄລຍະການຮັບອຸດໜູນ ໜຶ່ງຮ້ອຍຫ້າວັນ ແມ່ນໃຫ້ຈ່າຍເປັນ ສາມຄັ້ງ ແຕ່ໃຫ້ນັບໄລຍະປະກັນຕົນເປັນ ສີ່ເດືອນ, ກໍລະນີຜູ້ທີ່ມີລູກແຝດ ທີ່ມີໄລຍະການຮັບອຸດໜູນ ໜຶ່ງຮ້ອຍຊາວວັນ ແມ່ນໃຫ້ຈ່າຍເປັນ ສີ່ຄັ້ງ.

ການຄິດໄລ່ເງິນອຸດໜູນໃຫ້ຜູ້ທີ່ພັກວຽກກ່ອນອອກລູກ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍແຮງງານ ຊຶ່ງພາຍຫຼັງອອກລູກແລ້ວ ສາມາດປະກອບເອກະສານຂໍຮັບການອຸດໜູນດັ່ງກ່າວນໍາອົງການປະກັນສັງຄົມແຫ່ງຊາດ ໂດຍໃຫ້ຄິດໄລ່ລວມກັບໄລຍະການພັກກ່ອນ ແລະ ຫຼັງ ການອອກລູກເຂົ້າກັນ ຊຶ່ງມີໄລຍະ ໜຶ່ງຮ້ອຍຫ້າວັນ ຫຼື ໜຶ່ງຮ້ອຍຊາວວັນ ຖ້າແມ່ນລູກແຝດ.

ການກໍານົດໄລຍະຂອງການຖືພາ ສໍາລັບການອຸດໜູນອອກລູກ ແລະ ບໍາເນັດອອກລູກ ທີ່ມີການກໍານົດໄລຍະຖືພາເປັນອາທິດຕາມໜັງສືຢັ້ງຢືນການແພດ ແມ່ນໃຫ້ຖືເອົາ ສີ່ອາທິດ ຄິດໄລ່ເປັນ ໜຶ່ງເດືອນ.

## 4. ມາດຕາ 59 ການຄິດໄລ່ເງິນອຸດໜູນບໍານານ

### 4.1. ການຄິດໄລ່ຄະແນນບໍານານ:

ຄະແນນບໍານານທັງໝົດ ແມ່ນຄະແນນບໍານານຈາກການຈ່າຍເງິນສົມທົບທັງໝົດ ບວກ ຄະແນນບໍານານຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ບວກ ຄະແນນບໍານານນະໂຍບາຍ ຊຶ່ງມີການຄິດໄລ່ແຕ່ລະປະເພດຄະແນນບໍານານ ດັ່ງນີ້:

- ຄະແນນບໍານານຈາກການຈ່າຍເງິນສົມທົບ ແມ່ນຈໍານວນເງິນປະກັນຕົນສະເລ່ຍຂອງຜູ້ກ່ຽວໃນແຕ່ລະປີ ຫານ ໃຫ້ຈໍານວນເງິນປະກັນຕົນສະເລ່ຍຂອງຜູ້ປະກັນຕົນທັງໝົດໃນໄລຍະເວລາດຽວກັນ.

**ຕົວຢ່າງ:** ນາງ ສ ມີເງິນປະກັນຕົນສະເລ່ຍໃນປີເທົ່າກັບ 3.000.000 ກີບ, ເງິນປະກັນຕົນສະເລ່ຍຂອງຜູ້ປະກັນຕົນທັງໝົດແມ່ນ 2.350.000 ກີບ, ຄະແນນບໍານານໃນປີນັ້ນເທົ່າກັບ:

= 3.000.000 ກີບ ÷ 2.350.000 ກີບ = 1,277 ຄະແນນ/ປີ.

- ຄະແນນບໍານານຈາກການຢຸດຈ່າຍເງິນສົມທົບຊົ່ວຄາວ ໃນເວລາຮັບອຸດໜູນປ່ວຍການ ຫຼື ອຸດໜູນອອກລູກ ແມ່ນ ຄະແນນບໍານານຈາກການຈ່າຍເງິນສົມທົບສະເລ່ຍໃນໄລຍະ ຊາວສີ່ເດືອນ ກ່ອນໄດ້ຮັບເງິນອຸດໜູນ ຫານ ໃຫ້ ສາມສິບວັນ ຄູນ ກັບຈໍານວນວັນພັກຮັບເງິນອຸດໜູນ.

**ຕົວຢ່າງ:** ນາງ ສ ມີຄະແນນບໍານານ 2,554 ໃນໄລຍະ ຊາວສີ່ເດືອນ, ມີວັນພັກປ່ວຍການ ສີ່ສິບຫ້າວັນ ການຄິດໄລ່ເທົ່າກັບ:[(2,554 + 24) ÷ 30] x 45 = 0,160 ຄະແນນ.

- ຄະແນນບໍານານນະໂຍບາຍ ແມ່ນຄະແນນທີ່ຄິດໄລ່ໃຫ້ຜູ້ເລີ່ມຕົ້ນເຂົ້າປະກັນຕົນ ທີ່ມີອາຍຸກະສຽນເກີນ ສາມປີ ຂຶ້ນໄປ ໃຫ້ຄິດໄລ່ເທົ່າກັບ 0,8 ຄະແນນ ຄູນ ກັບຈໍານວນປີທີ່ອາຍຸເກີນ, ຄະແນນນະໂຍບາຍດັ່ງກ່າວຄິດໄລ່ໃຫ້ສູງສຸດບໍ່ເກີນ 12 ຄະແນນ.

**ຕົວຢ່າງ:** ນາງ ສ ມີອາຍຸກະສຽນ 40 ປີ ຕອນທີ່ຜູ້ກ່ຽວເລີ່ມເຂົ້າປະກັນຕົນ ຄະແນນບໍານານນະໂຍບາຍຄິດໄລ່ດັ່ງນີ້: (40 ປີ – 30 ປີ) x 0,8 ຄະແນນ = 8 ຄະແນນ.

### 4.2. ເງິນເດືອນປະກັນຕົນສະເລ່ຍຄາດຄະເນ

ເງິນປະກັນຕົນສະເລ່ຍຂອງຜູ້ປະກັນຕົນໃນປີ ແມ່ນເອົາເງິນປະກັນຕົນຂອງຜູ້ກ່ຽວທີ່ມີໃນແຕ່ລະເດືອນຂອງປີດັ່ງກ່າວບວກກັນ ແລ້ວຫານໃຫ້ສິບສອງ.



Scanned with CamScanner

ເງິນປະກັນຕົນສະເລ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ ແມ່ນຈໍານວນເງິນປະກັນຕົນສະເລ່ຍທັງໝົດໃນໜຶ່ງປີຜ່ານມາບວກອັດຕາການເໜັງຕີງສົມທຽບໃສ່ປີກ່ອນນັ້ນໜຶ່ງປີ, ສໍາລັບປີທີ່ມີການປັບປຸງເພດານເງິນປະກັນຕົນສູງສຸດ ແມ່ນຈະມີວິທີການຄິດໄລ່ຕ່າງຫາກເພື່ອໃຫ້ໃກ້ຄຽງກັບເງິນເດືອນສະເລ່ຍຕົວຈິ່ງໃນໄລຍະນັ້ນ.

**4.3 ການຄິດໄລ່ເງິນອຸດໜູນບໍານານ:**

ໃຫ້ເອົາຄະແນນບໍານານທັງໝົດຂອງຜູ້ກ່ຽວ ຄູນ ກັບເງິນປະກັນຕົນສະເລ່ຍຄາດຄະເນຂອງຜູ້ປະກັນຕົນທັງໝົດ ຄູນ ຕົວດັດສະນີ 2%.

**ຕົວຢ່າງ:** ນາງ ສ ມີປີການ 20 ປີ, ຖ້າຄະແນນບໍານານຂອງຜູ້ກ່ຽວໃນແຕ່ລະປີແມ່ນ 1,277 ຄະແນນ, ຄະແນນບໍານານຈາກການຈ່າຍເງິນສົມທົບທັງໝົດຂອງຜູ້ກ່ຽວເທົ່າກັບ: 1,277 x 20 ປີ = 25,540 ຄະແນນ, ຄະແນນບໍານານທັງໝົດເທົ່າກັບ: 25,540 + 0,160 + 8 = 33,700 ຄະແນນ.

ເງິນບໍານານເທົ່າກັບ: 33,700 ຄະແນນ x 2.350.000 ກີບ x 2% =1.583.900 ກີບ/ເດືອນ.

## 5. ມາດຕາ 75 ການມອບເງິນສົມທົບ

**5.1** ຜູ້ອອກແຮງງານໃນຫົວໜ່ວຍແຮງງານ ທີ່ມີເງິນເດືອນໃນລະຫວ່າງຄ່າແຮງງານຂັ້ນຕ່ຳສຸດ ທີ່ລັດຖະບານກໍານົດ ຫາເພດານສູງສຸດນີ້ ແມ່ນໃຫ້ເອົາເງິນເດືອນຕົວຈິ່ງທີ່ໄດ້ຮັບເປັນບ່ອນອີງໃນການຄິດໄລ່ເງິນສົມທົບ, ກໍລະນີມີຄວາມຈໍາເປັນທີ່ລາຍຮັບປະຈໍາເດືອນຂອງຜູ້ອອກແຮງງານຫາກຫຼຸດລະດັບຄ່າແຮງງານຂັ້ນຕ່ຳສຸດ ແມ່ນສາມາດເອົາມາເປັນບ່ອນອີງແຕ່ບໍ່ຫຼຸດ 25% ຂອງຄ່າແຮງງານຂັ້ນຕ່ຳທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ, ຖ້າຫາກ ຫຼຸດ 25% ຂອງລະດັບຄ່າແຮງງານຂັ້ນຕ່ຳສຸດ ແມ່ນບໍ່ໃຫ້ຄິດໄລ່ເຂົ້າເປັນໄລຍະປະກັນຕົນ, ສ່ວນເງິນທີ່ສົມທົບນັ້ນແມ່ນຈະສະສົມໄວ້ເພື່ອຄິດໄລ່ເປັນຄະແນນບໍານານ.

**5.2** ການມອບເງິນສົມທົບຂອງຜູ້ປະກັນຕົນແບບສະໝັກໃຈ ມີ ດັ່ງນີ້:

ຜູ້ສະໝັກໃຈທີ່ເລີ່ມເຂົ້າເປັນຜູ້ປະກັນຕົນໃໝ່ ສາມາດເລືອກເງິນປະກັນຕົນໄດ້ສູງສຸດບໍ່ເກີນ 60% ຂອງເພດານເງິນປະກັນຕົນສູງສຸດທີ່ໄດ້ກໍານົດໃນແຕ່ລະໄລຍະ, ສໍາລັບຜູ້ສະໝັກໃຈທີ່ສືບຕໍ່ຈ່າຍ ຫຼື ຕໍ່ສັນຍາໃໝ່ ສາມາດເລືອກ ຫຼື ປ່ຽນລະດັບເງິນປະກັນຕົນໃໝ່ໄດ້ ແຕ່ບໍ່ໃຫ້ຫຼຸດ ຫຼື ເພີ່ມ 50% ຈາກລະດັບເງິນປະກັນຕົນເກົ່າທີ່ເລືອກຜ່ານມາ ແຕ່ບໍ່ໃຫ້ຫຼຸດຄ່າແຮງງານຂັ້ນຕ່ຳສຸດຂອງຜູ້ອອກແຮງງານຫາເພດານສູງສຸດທີ່ໄດ້ກໍານົດໄວ້;

ຜູ້ສະໝັກໃຈ ທີ່ສິ້ນສຸດສັນຍາ ແລະ ມີການປະໄລຍະຫ່າງຂອງສັນຍາເກີນ ສາມເດືອນ ແມ່ນບໍ່ມີສິດມອບເງິນສົມທົບຍ້ອນຫຼັງໄດ້ໂດຍໃຫ້ເລີ່ມສັນຍາໃໝ່ໃນເດືອນປະຈຸບັນເປັນຕົ້ນໄປ, ສໍາລັບຜູ້ທີ່ຄ້າງຈ່າຍຕ້ອງຊໍາລະສັນຍາເກົ່າໃຫ້ຄົບກ່ອນ ແລ້ວຈິ່ງເລີ່ມເຮັດສັນຍາໃໝ່ໃນເດືອນປະຈຸບັນທີ່ຢູ່ເປັນຕົ້ນໄປ.

ຜູ້ສະໝັກໃຈທີ່ມີການຄ້າງຈ່າຍຕາມສັນຍາ ຕ້ອງໄດ້ມອບເງິນສົມທົບຍ້ອນຫຼັງຕາມຈໍານວນເດືອນທີ່ຄ້າງຈ່າຍນັ້ນໃຫ້ຄົບຖ້ວນ ແຕ່ໄລຍະທີ່ມອບເງິນສົມທົບຍ້ອນຫຼັງ ແມ່ນຈະບໍ່ຖືເປັນເງື່ອນໄຂໃນການຮັບອຸດໜູນທີ່ເກີດຂຶ້ນກ່ອນການມອບເງິນສົມທົບຍ້ອນຫຼັງດັ່ງກ່າວ;

## 6. ມາດຕາ 90 ການຂຶ້ນທະບຽນປະກັນສັງຄົມ

ແມ່ນການຢັ້ງຢືນໃນການເຂົ້າຮ່ວມເປັນສະມາຊິກຂອງລະບົບປະກັນສັງຄົມ ຊຶ່ງມີສອງເປົ້າໝາຍເຂົ້າຮ່ວມຄື: ເປົ້າໝາຍເຂົ້າຮ່ວມຕາມພັນທະຂອງກົດໝາຍ ແລະ ເປົ້າໝາຍເຂົ້າຮ່ວມລະບົບແບບສະໝັກໃຈ ດັ່ງນີ້:

**1) ກຸ່ມເປົ້າໝາຍເຂົ້າຮ່ວມລະບົບຕາມພັນທະຂອງກົດໝາຍ ປະກອບມີ:**

- ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ;
- ພະນັກງານ, ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານບໍານານ, ຜູ້ເສຍອົງຄະ ແລະ ສະມາຊິກຄອບຄົວຂອງພວກກ່ຽວ;



Scanned with CamScanner

- ຫົວໜ່ວຍແຮງງານຕ່າງໆລວມທັງຂອງລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດໃນທຸກຂົງເຂດເຊັ່ນ: ອຸດສະຫະກຳ, ກະສິກຳ ແລະ ການບໍລິການ;
- ຜູ້ອອກແຮງງານໃນຫົວໜ່ວຍແຮງງານໃດໜຶ່ງທີ່ມີເງິນເດືອນຫຼືຄ່າແຮງງານ;
- ພະນັກງານຄົນລາວທີ່ເຮັດວຽກຢູ່ສະຖານທູດ, ກົງສຸນ, ອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ສັງກັດລັດຖະບານທີ່ປະຈຳຢູ່ ສປປ ລາວ;
- ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກໃນຫົວໜ່ວຍແຮງງານໃດໜຶ່ງຊຶ່ງມີເງິນເດືອນ ຫຼືຄ່າແຮງງານ ແລະ ມີໃບອະນຸຍາດອອກແຮງງານ (Work Permit) ທີ່ອອກໃຫ້ໂດຍອົງການກ່ຽວຂ້ອງຢູ່ ສປປ ລາວ.

**2) ກຸ່ມເປົ້າໝາຍແບບສະໝັກໃຈ ປະກອບມີ:**

- ຜູ້ປະກອບອາຊີບສ່ວນບຸກຄົນ, ຊາວກະສິກອນ, ຄ້າຂາຍ, ຜູ້ເຮັດການບໍລິການ ແລະ ອື່ນໆ ທີ່ມີສຸຂະພາບແຂງແຮງ ແລະ ມີລາຍໄດ້ປົກກະຕິໃດໜຶ່ງ;
- ບຸກຄົນທົ່ວໄປ ທີ່ບໍ່ມີສະຖານະພາບເປັນຜູ້ອອກແຮງງານໃນຫົວໜ່ວຍແຮງງານ;
- ຜູ້ທີ່ມີອາຍຸກະສຽນ 14 ຫາ 60 ປີ, ສຳລັບຜູ້ທີ່ມີອາຍຸເກີນ 60 ປີ ຕ້ອງແມ່ນຜູ້ທີ່ເຄີຍປະກັນຕົນໃນຫົວໜ່ວຍແຮງງານມາກ່ອນ ສາມາດສືບຕໍ່ເຂົ້າຮ່ວມລະບົບແບບສະໝັກໃຈໄດ້ ໂດຍມີໄລຍະການຢຸດຈ່າຍເງິນສົມທົບບໍ່ເກີນ ສາມເດືອນ ນັບແຕ່ເດືອນປະຈຸບັນຄືນຫຼັງ;
- ຜູ້ທີ່ເຄີຍເປັນສະມາຊິກປະກັນສັງຄົມມາກ່ອນ ແລະ ຍັງບໍ່ທັນໄດ້ເຮັດວຽກໃໝ່ ຫລື ບໍ່ໄດ້ຮັບອຸດໜູນໄລຍະຍາວໃດໜຶ່ງຈາກກອງທຶນປະກັນສັງຄົມ ສາມາດສືບຕໍ່ຈ່າຍໃນເດືອນປະຈຸບັນເປັນຕົ້ນໄປ, ສຳລັບຜູ້ທີ່ຢຸດຈ່າຍເງິນສົມທົບບໍ່ເກີນ ສາມເດືອນ ນັບແຕ່ເດືອນປະຈຸບັນຄືນຫຼັງ ສາມາດຈ່າຍຍ້ອນຫຼັງຄືນໄດ້;
- ສຳລັບ ພະສົງ, ສຳມະເນນ, ນັກບວດ, ແມ່ຂາວ ແລະ ຄົນຕ່າງປະເທດ ແມ່ນບໍ່ຢູ່ໃນເປົ້າໝາຍຜູ້ສະໝັກໃຈ.

ຜູ້ປະກັນຕົນສະໝັກໃຈ ຕ້ອງປະກອບແບບຟອມ ແລະ ເຮັດສັນຍາຜູກພັນຕ່າງໆກັບ ອົງການປະກັນສັງຄົມແຫ່ງຊາດຕາມການແບ່ງຂັ້ນຄຸ້ມຄອງ ບ່ອນທີ່ຕົນເອງດຳລົງຊີວິດ ຫຼື ເຮັດວຽກຢູ່;

ການເຮັດສັນຍາແຕ່ລະຄັ້ງ ຜູ້ກ່ຽວຕ້ອງມາດ້ວຍຕົນເອງ, ຍົກເວັ້ນກໍລະນີມາສືບຕໍ່ສັນຍາ ແລະ ບໍ່ມີການປ່ຽນແປງລະດັບເງິນປະກັນຕົນໃໝ່ ສາມາດໃຫ້ຜູ້ອື່ນເປັນຕົວແທນມາຕໍ່ສັນຍາໃຫ້ກໍໄດ້, ສັນຍາແຕ່ລະຄັ້ງຈະມີອາຍຸຊາວສີ່ເດືອນ;

ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ບຸກຄົນທົ່ວໄປ ຖ້າສະໝັກເປັນຜູ້ປະກັນຕົນແບບສະໝັກໃຈແມ່ນໃຫ້ເລີ່ມສັນຍາ ແລະ ຈ່າຍເງິນສົມທົບນັບແຕ່ເດືອນທີ່ເລີ່ມເຮັດສັນຍາເປັນຕົ້ນໄປ.

ກໍລະນີພົບເຫັນການຂຶ້ນທະບຽນ ແລະ ການຈ່າຍເງິນສົມທົບທີ່ຜິດພາດ ຂອງຄົນຕ່າງປະເທດທີ່ບໍ່ມີໃບອະນຸຍາດອອກແຮງງານ (Work Permit) ແລະ ຜູ້ກຳລັງຮັບການອຸດໜູນໄລຍະຍາວຈາກອົງການປະກັນສັງຄົມແຫ່ງຊາດ ຊຶ່ງໄດ້ມີການມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແລ້ວ ທາງອົງການປະກັນສັງຄົມແຫ່ງຊາດ ຈະພິຈາລະນາໂຈະການເປັນຜູ້ປະກັນຕົນ ແລະ ສົ່ງເງິນສົມທົບຄືນ ຍົກເວັ້ນເງິນສົມທົບຮ່ວງກອງທຶນອຸດໜູນປະກັນສຸຂະພາບ.

## 7. ມາດຕາ 92 ການຍື່ນເອກະສານຂຶ້ນທະບຽນ ແລະ ອອກບັດປະກັນສັງຄົມ

ຫົວໜ່ວຍແຮງງານ ທີ່ຍື່ນເອກະສານການຂຶ້ນທະບຽນປະກັນສັງຄົມຄົບຖ້ວນແລ້ວ ອົງການປະກັນສັງຄົມແຫ່ງຊາດ ຕ້ອງພິຈາລະນາການຂຶ້ນທະບຽນ ແລະ ອອກໃບຢັ້ງຢືນການຂຶ້ນທະບຽນໃຫ້ຫົວໜ່ວຍແຮງງານ ພາຍໃນເວລາ ໜຶ່ງ ຫາ ສອງ ວັນລັດຖະການ, ສຳລັບຜູ້ອອກແຮງງານ ແມ່ນຕ້ອງຂຶ້ນທະບຽນ ແລະ ອອກບັດປະກັນສັງຄົມພາຍໃນເວລາ ສາມສິບວັນ.



Scanned with CamScanner

ຜູ້ສະໝັກໃຈ ທີ່ປະກອບຟອມ ແລະ ເຮັດສັນຍາຜູກພັນແລ້ວ ຈະຂຶ້ນທະບຽນ ແລະ ອອກບັດປະກັນສັງຄົມໃຫ້ທັນທີ.

**8. ມາດຕາ 93 ການສະສົມໄລຍະປະກັນຕົນ**

- ການກຳນົດໄລຍະປະກັນຕົນ ສຳລັບຜູ້ທີ່ມີໄລຍະປະກັນຕົນປີສຸດທ້າຍທີ່ບໍ່ຄົບ ສິບສອງເດືອນ ຖ້າມີເງິນສົມທົບແຕ່ ເຈັດເດືອນ ຫາ ສິບສອງເດືອນ ໃຫ້ຖືເປັນ ໜຶ່ງປີ;

- ໄລຍະປະກັນຕົນສຳລັບຜູ້ທີ່ຮັບອຸດໜູນປ່ວຍການ ແລະ ອຸດໜູນອອກລູກລາຍເດືອນ ທີ່ບໍ່ຄົບ ສາມສິບວັນ ແມ່ນໃຫ້ຖືເອົາ ສິບຫ້າວັນ ຂຶ້ນໄປ ເປັນໄລຍະປະກັນຕົນ ໜຶ່ງເດືອນ, ຖ້າບໍ່ຄົບ ສິບຫ້າວັນ ແມ່ນຕ້ອງໄດ້ມອບເງິນສົມທົບເຂົ້າໃນເດືອນດັ່ງກ່າວ;

- ຜູ້ປະກັນຕົນທີ່ໄດ້ມອບເງິນສົມທົບຢູ່ຫຼາຍບ່ອນ ຫຼື ຜູ້ປະກັນຕົນທີ່ໄດ້ຍົກຍ້າຍຈາກການຈັດຕັ້ງຂອງລັດໄປຫົວໜ່ວຍແຮງງານ ຫຼື ຫົວໜ່ວຍແຮງງານມາການຈັດຕັ້ງຂອງລັດ ຊຶ່ງໄດ້ສະສົມເງິນສົມທົບ, ປີການ ຫຼື ປີປະກັນຕົນ ແລະ ຍັງບໍ່ໄດ້ຮັບເງິນອຸດໜູນເທື່ອດຽວມາກ່ອນ ກໍໃຫ້ສະສົມປີການ ຫຼື ປີປະກັນຕົນ ເພື່ອຮັບການອຸດໜູນຕາມພາກລັດ ຫຼື ພາກວິສາຫະກິດ ແລະ ຜູ້ສະໝັກໃຈເທົ່ານັ້ນ, ຊຶ່ງມີວິທີຄິດໄລ່ເງິນອຸດໜູນບຳນານ ດັ່ງນີ້:

**1)** ຜູ້ທີ່ຄົບເງື່ອນໄຂຂໍຮັບອຸດໜູນບຳນານຢູ່ພາກລັດ ການຄິດໄລ່ເງິນອຸດໜູນບຳນານ ແມ່ນໃຫ້ບວກ ໄລຍະປະກັນຕົນທີ່ໄດ້ຈ່າຍເງິນສົມທົບຢູ່ພາກວິສາຫະກິດ ເປັນປີການເພີ່ມເຂົ້າໃນການຄິດໄລ່ຕາມລະບົບການອຸດໜູນບຳນານຂອງພາກລັດ;

**2)** ຜູ້ທີ່ຂໍຮັບອຸດໜູນບຳນານຢູ່ພາກວິສາຫະກິດ ແລະ ຜູ້ສະໝັກໃຈ ແມ່ນໃຫ້ເອົາປີການຢູ່ເບື້ອງລັດ ມາຄິດໄລ່ເປັນຄະແນນບຳນານເພີ່ມໃຫ້ຜູ້ກ່ຽວ ຊຶ່ງເທົ່າກັບ 0,8 ຄະແນນຕໍ່ປີຕາມລະບົບຄະແນນນະໂຍບາຍ.

**9. ມາດຕາ 95 ການພິຈາລະນາການອຸດໜູນປະກັນສັງຄົມ**

- ການພິຈາລະນາ ແລະ ອະນຸມັດເງິນອຸດໜູນບຳນານສຳລັບພາກລັດ ແມ່ນພາກສ່ວນທີ່ກ່ຽວຂ້ອງອອກຂໍ້ຕົກລົງຮັບການອຸດໜູນບຳນານ ໂດຍແຈ້ງເງິນເດືອນ ເດືອນສຸດທ້າຍ ແລະ ປີການຕາມແຈ້ງການຂອງຂະແໜງການພາຍໃນ, ສຳລັບພາກວິສາຫະກິດ ແລະ ຜູ້ສະໝັກໃຈ ແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ພິຈາລະນາ ແລະ ອະນຸມັດອອກຂໍ້ຕົກລົງ. ສ່ວນການຄິດໄລ່ເງິນອຸດໜູນບຳນານ ແມ່ນມອບໃຫ້ອົງການປະກັນສັງຄົມແຫ່ງຊາດເປັນຜູ້ຈັດຕັ້ງປະຕິບັດ;

- ການພິຈາລະນາການອຸດໜູນເທື່ອດຽວໃຫ້ກັບຜູ້ທີ່ບໍ່ຄົບເງື່ອນໄຂຮັບການອຸດໜູນບຳນານ ຕາມມາດຕາ 61 ຕ້ອງແມ່ນຜູ້ທີ່ໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ ສິບສອງເດືອນ ຂຶ້ນໄປ, ສຳລັບຜູ້ອອກແຮງງານຕ່າງປະເທດຕ້ອງແມ່ນຜູ້ທີ່ສິ້ນສຸດສັນຍາແຮງງານ ຫຼື ບັດອະນຸຍາດອອກແຮງງານ, ຕ້ອງໄດ້ກັບຄືນປະເທດ ແລະ ຖືເປັນການສິ້ນສຸດໄລຍະປະກັນຕົນ.

- ການພິຈາລະນາການອຸດໜູນປະກັນສັງຄົມ ແມ່ນໃຫ້ຖືເອົາວັນທີເຫດການເກີດຂຶ້ນເປັນບ່ອນອີງ ໂດຍກຳນົດເອົາວັນທີ 15 ຂອງເດືອນຂຶ້ນໄປ ໃຫ້ສາມາດນັບເປັນໄລຍະປະກັນຕົນຂອງການເກີດສິດຮັບການອຸດໜູນ, ຖ້າເຫດການເກີດຂຶ້ນກ່ອນວັນທີ 15 ຂອງເດືອນ ແມ່ນຈະບໍ່ຖືເປັນໄລຍະປະກັນຕົນຂອງເດືອນນັ້ນ;

- ຜູ້ປະກັນຕົນ ທີ່ພັກປ່ວຍການນັບແຕ່ ໜຶ່ງວັນຂຶ້ນໄປ ສາມາດປະກອບເອກະສານເພື່ອຂໍຮັບການອຸດໜູນປ່ວຍການ ຈາກອົງການປະກັນສັງຄົມແຫ່ງຊາດ, ກໍລະນີມີໄລຍະວັນພັກປ່ວຍການບໍ່ຕໍ່ເນື່ອງ ຖ້າມີການຢັ້ງຢືນພັກປ່ວຍການຫຼາຍຄັ້ງພາຍໃນຂອບເຂດ ສາມສິບວັນ ແມ່ນສາມາດນຳມາຢັ້ງຢືນເພື່ອສືບຕໍ່ຮັບການອຸດໜູນນັ້ນເລີຍ ແຕ່ຖ້າມີໄລຍະຫ່າງກັນເກີນ ສາມສິບວັນ ແມ່ນຕ້ອງໄດ້ປະກອບແບບຟອມຂໍຮັບອຸດໜູນໃໝ່;

- ຜູ້ສະໝັກໃຈ ທີ່ຄົບເງື່ອນໄຂຮັບອຸດໜູນບຳນານ ສາມາດຮ້ອງຂໍບຳນານໄດ້ເລີຍ ໂດຍບໍ່ຕ້ອງລໍຖ້າໃຫ້ໝົດອາຍຸສັນຍາ ແຕ່ຖ້າຢາກສືບຕໍ່ມອບເງິນສົມທົບ ກໍສາມາດສືບຕໍ່ໄດ້.



Scanned with CamScanner

**10. ມາດຕາ 97 ຂໍ້ຫ້າມສໍາລັບຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ**

- ຜູ້ປະກັນຕົນສະໝັກໃຈທີ່ສິ້ນສຸດການຮັບອຸດໜູນປະກັນສັງຄົມແລ້ວປະລະສັນຍາ ຈະບໍ່ອະນຸຍາດໃຫ້ກັບເຂົ້າສູ່ລະບົບປະກັນສັງຄົມແບບສະໝັກໃຈອີກ;

- ກໍລະນີພົບເຫັນການປອມແປງເອກະສານຂໍອຸດໜູນປະກັນສັງຄົມ ຫຼື ເປັນການຊື້ສິດເພື່ອຮັບອຸດໜູນປະກັນສັງຄົມ ອົງການປະກັນສັງຄົມແຫ່ງຊາດ ມີສິດໂຈະ ຫຼື ລຶບລ້າງການອຸດໜູນດັ່ງກ່າວນັ້ນ ແລະ ມີສິດຮຽກເກັບເງິນຄືນ ຫາກໄດ້ຈ່າຍເງິນອຸດໜູນໄປແລ້ວ ພ້ອມດໍາເນີນການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## III. ການຈັດຕັ້ງປະຕິບັດ

1. ມອບໃຫ້ ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ເປັນຜູ້ກະກຽມ ແລະ ເລີ່ມຈັດຕັ້ງປະຕິບັດໄປຈົນກວ່າຈະມີການປັບປຸງການຈັດຕັ້ງເປັນ ອົງການປະກັນສັງຄົມແຫ່ງຊາດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 87 ຂອງກົດໝາຍສະບັບນີ້;

2. ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ຫົວໜ່ວຍແຮງງານ, ບຸກຄົນ, ນິຕິບຸກຄົນ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ແລະ ຄໍາແນະນໍາສະບັບນີ້;

3. ອົງການປະກັນສັງຄົມແຫ່ງຊາດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈັດຕັ້ງເຊື່ອມຊຶມ, ເຜີຍແຜ່, ແນະນໍາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ແລະ ຄໍາແນະນໍາສະບັບນີ້ ໃຫ້ທົ່ວເຖິງ;

4. ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ພຶດສະພາ 2019 ເປັນຕົ້ນໄປ ແລະ ປ່ຽນແທນຄໍາແນະນໍາສະບັບເລກທີ 2751/ຮສສ, ລົງວັນທີ 24 ກໍລະກົດ 2015.

**ລັດຖະມົນຕີ**

ບອ. ຄໍາແພງ ໄຊສົມແພງ



Scanned with CamScanner